# ຄຳນຳຂອງເພງ ສະດຸດີ ຊຸດທີ່ ໑

ພວກພີ່ນ້ອງກຣິຕັງທີ່ຮັກແພງ.

ຍ້ອນພວກເຮົາເຊື່ອ, ຮັກແລະຫວັງ ພວກເຮົາຈຶ່ງສັກກາຣະບູຊາ ອຸທິດຕົນເພື່ອພຣະເຈົ້າ ຜູ່ເປັນບິດາ ຜູ່ເປັນກົກແລະປາຍ ທັງເປັນຍອດຄວາມສຸກຂອງມະນຸດ.

ການພາວະນາແລະຖວາຍມະຫາບູຊາແດ່ພຣະເຈົ້າ ເປັນກິຈການຈຳເປັນ ແລະ ສຳຄັນສຳລັບຊີວິດເປັນລູກພຣະເຈົ້າ, ແລະຕາມຄວາມຮຽກຮ້ອງຕ້ອງການ ຂອງຊາວຄຣິດຕະຊົນລາວທີ່ປະເທດຝຣັ່ງເສດ, ພວກເຮົາຍິນດີ ຂໍສເນີບົດເພງ ສັກສິດຕ່າງໆ  ເພື່ອຊ່ວຍພວກພີ່ນ້ອງໃນໂອກາດ ພາວະນາ  ຕອນເຊົ້າ ແລະ ຄ່ຳ ພາຍໃນຄອບຄົວ, ສ່ວນຕົວ ຫລື ຮ່ວມກັບພີ່ນ້ອງກຣິສຕັງ ແລະ ເປັນຕົ້ນໃນໂອກາດ ຖວາຍມະຫາບູຊາ ເພື່ອໃຫ້ໄດ້ສັນຣະເສີນພຣະເຈົ້າໃນພາສາຂອງພວກພີ່ນ້ອງເອງ.

ຫວັງວ່າບົດເພງສັກສິດນີ້ ຈະຊ່ວຍໃຫ້ພວກພີ່ນ້ອງໄດ້ບູຊາສັນຣະເສີນພຣະເຈົ້າຢ່າງສງ່າ ແລະ ສັດທາຕື່ມຂື້ນ.

« ພວກພີ່ນ້ອງຜູ່ພຣະເຈົ້າຊົງເລືອກສັນ, ຜູ່ສັກສິດຂອງພຣະເຈົ້າ ແລະຜູ່ທີ່ພຣະອົງຊົງຮັກຫອມທັງຫລາຍ, ຈົ່ງຮູ້ຈັກສົມມະນາຄຸນພຣະເປັນເຈົ້າ,ຈົ່ງສັນຣະເສີນພຣະເຈົ້າ ດ້ວຍບົດເພງສັກສິດ ບົດສະດຸດີ, ບົດຮ້ອງຕ່າງໆ ຕາມ ທີ່ ພຣະຈິດເຈົ້າບັນດົນ. »  (ຈົດໝາຍ ເຖິງຊາວ ໂກໂລຊາ 3/12…16)

ຄຸນພໍ່ຜູ່ອະພິບານ ຊາວກາໂທລິກລາວ  
ທີ່ປະເທດຝຣັ່ງເສດ.